ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 107 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 19 ສິງຫາ 2022

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 50/ສພຊ, ລົງວັນທີ 07 ກໍລະກົດ 2022 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 05 ສິງຫາ 2022.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 50 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 07 / 07 / 22

# ມະຕິ
# ຂອງກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊັບສິນຂອງລັດ
# (ສະບັບປັບປຸງ)

- ອີງຕາມລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມ ຄັ້ງວັນທີ 1 ກໍລະກົດ 2022 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນເຊົ້າຂອງວັນທີ 7 ກໍລະກົດ 2022.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 18 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

# ກົດໝາຍ
# ວ່າດ້ວຍຊັບສິນຂອງລັດ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການນຳໃຊ້ ແລະ ການຕິດຕາມ ກວດກາ ຊັບສິນຂອງລັດ ເພື່ອໃຫ້ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ແລະ ກົດໝາຍ ແນໃສ່ປົກປັກຮັກສາ ແລະ ພັດທະນາຊັບສິນຂອງລັດ ໃຫ້ຕໍ່ເນື່ອງ, ຍາວນານ ແລະ ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ຊັບສິນຂອງລັດ**

ຊັບສິນຂອງລັດ ແມ່ນ ຊັບສົມບັດທີ່ເກີດຂຶ້ນຕາມທຳມະຊາດ, ການສ້າງຂຶ້ນຂອງຄົນທີ່ເປັນ ກຳມະສິດຂອງລັດ ແລະ ຂອງວົງຄະນະຍາດແຫ່ງຊາດ ຊຶ່ງປະກອບດ້ວຍ ສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ຢູ່ເທິງໜ້າດິນ,ໃຕ້ດິນ, ໜ້ານ້ຳ, ໃຕ້ນ້ຳ ແລະ ນ່ານຟ້າໃນຂອບເຂດພື້ນແຜ່ນດິນຂອງ ສປປ ລາວ ລວມທັງ ຊັບສິນຂອງລັດ ສປປ ລາວ ທີ່ຢູ່ຕ່າງປະເທດ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສັງຫາລິມະຊັບ** ໝາຍເຖິງ ຊັບສິ່ງຂອງທີ່ສາມາດເຄື່ອນຍ້າຍໄດ້ ຊຶ່ງປະກອບດ້ວຍ ຊັບສິນທີ່ມີຕົວຕົນ ເປັນຕົ້ນ ພາຫະນະ, ເຄື່ອງກົນຈັກ, ວັດຖຸ ແລະ ຊັບສິນທີ່ບໍ່ມີຕົວຕົນ ເປັນຕົ້ນ ຊັບສິນທາງປັນຍາ, ຊັບສິນດິຈິຕອນ;

2. **ອະສັງຫາລິມະຊັບ** ໝາຍເຖິງ ຊັບສິ່ງຂອງທີ່ບໍ່ສາມາດເຄື່ອນຍ້າຍໄດ້ ຊຶ່ງມີ ທີ່ດິນ ແລະ ຊັບສິ່ງຂອງທີ່ຕິດກັບທີ່ດິນຢ່າງຖາວອນ ເຊັ່ນ ເຮືອນ, ຕົ້ນໄມ້ ຫຼື ສິ່ງກໍ່ສ້າງອື່ນ;

3. **ທີ່ດິນ** ໝາຍເຖິງ ຊັບພະຍາກອນອັນລ້ຳຄ່າ ແລະ ທຶນຮອນອັນມະຫາສານຂອງຊາດ ທີ່ເປັນບ່ອນດຳລົງຊີວິດ ແລະ ທຳມາຫາກິນຂອງພົນລະເມືອງລາວ, ເປັນພາຫະນະອັນສຳຄັນ ແລະ ປັດໄຈຕົ້ນຕໍຂອງການຜະລິດ, ການພັດທະນາເສດຖະກິດ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

4. **ສິ່ງກໍ່ສ້າງ** ໝາຍເຖິງ ຕຶກ, ອາຄານ, ໂຮງຈັກ, ໂຮງງານ, ເຂື່ອນ, ໂຄງລ່າງພື້ນຖານ, ມໍຣະດົກສະຖານ ແລະ ສິ່ງກໍ່ສ້າງອື່ນ;

5. **ການຂຶ້ນບັນຊີຊັບສິນຂອງລັດ** ໝາຍເຖິງ ການຈົດກ່າຍ ຫຼື ບັນທຶກ ຈຳນວນ, ເລກທະບຽນ, ເລກລະຫັດ, ມູນຄ່າ ແລະ ຕົ້ນກຳເນີດຂອງຊັບສິນຂອງລັດ;

6. **ການຂຶ້ນທະບຽນຊັບສິນຂອງລັດ** ໝາຍເຖິງ ການໃສ່ເລກທະບຽນ, ການໃສ່ລະຫັດ, ການຕິດກາໝາຍ ຊຶ່ງເປັນການກຳນົດລັກສະນະສະເພາະ ແລະ ເປັນຂໍ້ມູນເບື້ອງຕົ້ນ ຂອງການລົງບັນຊີຕິດຕາມ;

7. **ພະນັກງານຄຸ້ມຄອງຊັບສິນຂອງລັດ** ໝາຍເຖິງ ພະນັກງານ-ລັດຖະກອນ ທີ່ສັງກັດຢູ່ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ;

8. **ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ** ໝາຍເຖິງ ການຈັດຕັ້ງທີ່ເຮັດວຽກງານຄຸ້ມຄອງຊັບສິນຂອງລັດ ຊຶ່ງປະກອບດ້ວຍ ກົມຄຸ້ມຄອງຊັບສິນແຫ່ງລັດ, ຂະແໜງຄຸ້ມຄອງຊັບສິນແຫ່ງລັດຂັ້ນແຂວງ, ໜ່ວຍງານຄຸ້ມຄອງຊັບສິນແຫ່ງລັດຂັ້ນເມືອງ ແລະ ໜ່ວຍງານເສດຖະກິດ-ການເງິນບ້ານ;

9. **ຄ່າພາກຫຼວງ** ໝາຍເຖິງ ຄ່າຊົມໃຊ້ຊັບພະຍາກອນທຳມະຊາດ ຊຶ່ງຜູ້ໄດ້ຮັບສິດນຳໃຊ້ຊັບພະຍາກອນດັ່ງກ່າວ ຕ້ອງໄດ້ຈ່າຍໃຫ້ແກ່ລັດຕາມລະບຽບການ;

10. **ຄ່າຊັບສິນທາງປັນຍາຂອງລັດ** ໝາຍເຖິງ ລາຍຮັບທີ່ໄດ້ຈາກ ຊັບສິນອຸດສາຫະກຳ, ພັນພືດໃໝ່, ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຂອງລັດ ຊຶ່ງລັດໄດ້ ໂອນ ຫຼື ອະນຸຍາດ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້;

11. **ສິດທິພິເສດຂອງລັດ** ໝາຍເຖິງ ສິດທີ່ເປັນເອກະສິດຂອງລັດຖະບານເທົ່ານັ້ນ ໃນການຕົກລົງໃຫ້ເປັນບຸລິມະສິດສະເພາະໃດໜຶ່ງ ເປັນຕົ້ນ ສິດຜູກຂາດ, ສິດອະນຸຍາດ ໃນກິດຈະການຄວບຄຸມ, ສິດນຳໃຊ້ລິຂະສິດຂອງລັດ ແລະ ສິດນຳໃຊ້ເຄື່ອງໝາຍການຄ້າຂອງລັດ;

12. **ຊັບສິນດິຈິຕອນຂອງລັດ** ໝາຍເຖິງ ຊັບສິນທີ່ຖືກສ້າງຂຶ້ນດ້ວຍຂໍ້ມູນເອເລັກໂຕຣນິກ ເພື່ອໃຫ້ເປັນຕົວກາງໃນການ ແລກປ່ຽນ ຫຼື ຊື້ ຂາຍ ດ້ວຍກັນ.

## ມາດຕາ 4 (ປັບປຸງ) ນະໂຍບາຍກ່ຽວກັບວຽກງານຊັບສິນຂອງລັດ

ລັດ ມີນະໂຍບາຍລົງທຶນໃສ່ການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ ແລະ ພັດທະນາຊັບສິນຂອງລັດ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ, ສ້າງ ແລະ ບຳລຸງຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບ, ນຳໃຊ້ລະບົບເຕັກນິກ, ເຕັກໂນໂລຊີ ທີ່ທັນສະໄໝ.

ລັດ ຊຸກຍູ້ ແລະ ສົ່ງເສີມໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນລົງທຶນເຂົ້າໃນການປົກປັກຮັກສາ ແລະ ພັດທະນາຊັບສິນຂອງລັດ ດ້ວຍການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ດ້ວຍຮູບການ ຫັນຊັບສິນເປັນທຶນ, ມອບສິດຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ ແລະ ສິດໄດ້ຮັບຜົນປະໂຫຍດຈາກຊັບສິນດັ່ງກ່າວ.

## ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານຊັບສິນຂອງລັດ

ວຽກງານຊັບສິນຂອງລັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;

2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມີການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ;

3. ຮັບປະກັນສິດຕົກລົງຕາມກົດໝາຍຂອງອົງການລັດທີ່ກ່ຽວຂ້ອງ;

4. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ;

5. ຖືກຕາມເປົ້າໝາຍ, ມາດຕະຖານ, ລະດັບຂັ້ນ, ປະຢັດ, ມີປະສິດທິພາບ, ປະສິດທິຜົນ, ເປີດເຜີຍ, ໂປ່ງໃສ, ສະເໝີພາບ, ຍາວນານ ແລະ ຍືນຍົງ;

6. ບູລະນະ, ສ້ອມແປງ, ບຳລຸງຮັກສາ ໃຫ້ຢູ່ໃນສະພາບດີ, ຊຳລະ ແລະ ໃຊ້ແທນຊັບສິນທີ່ຕົກເຮ່ຍເສຍຫາຍ ຕາມກົດໝາຍ;

7. ຕີລາຄາມູນຄ່າຊັບສິນຂອງລັດ ຕາມກົນໄກຕະຫຼາດ ໃນການ ຊື້ ຂາຍ, ໃຫ້ເຊົ່າ, ໃຫ້ສຳປະທານ, ເຂົ້າຮ່ວມທຶນ, ແລກປ່ຽນ ແລະ ອື່ນໆ ເວັ້ນເສຍແຕ່ກົດໝາຍຫາກໄດ້ກຳນົດໄວ້ເປັນຢ່າງອື່ນ;

8. ມອບລາຍຮັບທີ່ໄດ້ຈາກຊັບສິນຂອງລັດ ເຂົ້າງົບປະມານແຫ່ງລັດ.

**ມາດຕາ 6 (ປັບປຸງ) ການໄດ້ມາຊັບສິນຂອງລັດ**

ຊັບສິນຂອງລັດໄດ້ມາ ຈາກຊັບທີ່ເກີດຂຶ້ນຕາມທຳມະຊາດ ແລະ ຈາກການສ້າງຂຶ້ນຂອງຄົນ.

ຊັບສິນຂອງລັດ ທີ່ເກີດຂຶ້ນຕາມທຳມະຊາດ ປະກອບດ້ວຍ ດິນ, ດອນ, ຖ້ຳ, ພູ, ຜາ, ປ່າໄມ້, ແຮ່ທາດ, ແຫຼ່ງນ້ຳ, ສັດນ້ຳ, ສັດປ່າ, ນ່ານຟ້າ, ນ່ານນ້ຳ, ອາກາດ ແລະ ຊັບພະຍາກອນທຳມະຊາດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຊັບສິນຂອງລັດ ທີ່ໄດ້ມາຈາກການສ້າງຂຶ້ນຂອງຄົນ ປະກອບດ້ວຍ:

1. ຊັບສິນ ທີ່ເປັນມໍຣະດົກຂອງຊາດ ຊຶ່ງມີ ມໍຣະດົກທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ;

2. ຊັບສິນ ທີ່ໄດ້ມາຈາກງົບປະມານຂອງລັດ ດ້ວຍ ການຊື້, ການແລກປ່ຽນ, ຊັບສິນທີ່ໄດ້ມາຈາກການຊ່ວຍເຫຼືອ, ການກູ້ຢືມ ຈາກພາຍໃນ ແລະ ຕ່າງປະເທດ, ການມອບກຳມະສິດໃຫ້ລັດ, ການຍຶດຊັບ, ການຮິບຊັບຕາມຄຳຕັດສິນຂອງສານ ຫຼື ສານຕັດສິນໃຫ້ລັດຄຸ້ມຄອງ, ການປັບໃໝ, ຊັບສິນ ທີ່ໄດ້ຈາກຜົນການກວດສອບ, ຜົນການກວດກາຂອງລັດ, ເງິນກອງທຶນຕ່າງໆຂອງລັດ, ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ ແລະ ມູນມໍຣະດົກທີ່ບໍ່ມີສາຍຍາດສືບທອດ ລວມທັງຊັບສິນທີ່ຕົກເປັນກຳມະສິດຂອງລັດ ດ້ວຍຮູບການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 7 ກຳມະສິດກ່ຽວກັບຊັບສິນຂອງລັດ**

ຊັບສິນທຸກປະເພດ ທີ່ເປັນກຳມະສິດຂອງລັດ ແລະ ຂອງວົງຄະນະຍາດແຫ່ງຊາດ ແມ່ນລັດເປັນຜູ້ຄຸ້ມຄອງຢ່າງລວມສູນ ເປັນເອກະພາບ ໂດຍມອບໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຄຸ້ມຄອງ, ນຳໃຊ້, ເຊົ່າ, ສຳປະທານ, ປົກປັກຮັກສາ ແລະ ພັດທະນາແບບຍືນຍົງ ຕາມກົດໝາຍ.

**ມາດຕາ 8 (ປັບປຸງ) ການປົກປ້ອງສິດໃນການຄຸ້ມຄອງ ແລະ ນຳໃຊ້ ຊັບສິນຂອງລັດ**

ລັດ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ ຊັບສິນຂອງລັດ ຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 9 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທີ່ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ ຊັບສິນຂອງລັດ ທີ່ມີຢູ່ໃນ ສປປ ລາວ ແລະ ຊັບສິນຂອງລັດ ສປປ ລາວ ທີ່ມີຢູ່ໃນຕ່າງປະເທດ.

**ມາດຕາ 10 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊັບສິນຂອງລັດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ, ການຊ່ວຍເຫຼືອ ແລະ ອື່ນໆ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ມີປະສິດທິຜົນ, ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ປະເພດຊັບສິນຂອງລັດ

**ມາດຕາ 11 ປະເພດຊັບສິນຂອງລັດ**

ຊັບສິນຂອງລັດ ແບ່ງອອກເປັນ ສອງ ປະເພດ ຄື ສາທາລະນະສົມບັດ ແລະ ລັດຖະສົມບັດ.

**ມາດຕາ 12 (ປັບປຸງ) ສາທາລະນະສົມບັດ**

ສາທາລະນະສົມບັດ ແມ່ນ ຊັບສິນຕ່າງໆຂອງວົງຄະນະຍາດແຫ່ງຊາດ ທີ່ເກີດຂຶ້ນຕາມທຳມະຊາດ ແລະ ຊັບສິນທີ່ຄົນສ້າງຂຶ້ນ ເພື່ອສາທາລະນະປະໂຫຍດ.

ສາທາລະນະສົມບັດ ປະກອບດ້ວຍ:

1. ຊັບພະຍາກອນທຳມະຊາດ: ດິນ, ນ່ານຟ້າ, ນ່ານນ້ຳ, ອາກາດ, ແມ່ນ້ຳ, ຫ້ວຍ, ບຶງ, ໜອງ, ເກາະ, ດອນ, ພູ, ຜາ, ຖ້ຳ, ປ່າໄມ້, ແຮ່ທາດ, ສັດນ້ຳ, ສັດປ່າ, ພືດທີ່ເກີດຂຶ້ນຕາມທຳມະຊາດ ແລະ ຊັບສິນທີ່ສ້າງຂຶ້ນຂອງຄົນ ເປັນຕົ້ນ ຄອງນ້ຳ, ອ່າງເກັບນ້ຳ, ໜ້າເຂື່ອນ, ຝາຍນ້ຳລົ້ນ;

2. ມໍລະດົກຂອງຊາດ: ມໍລະດົກທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ສະຖານທີ່ທ່ອງທ່ຽວທຳມະຊາດ, ບູຮານສະຖານ, ວັດຖຸບູຮານ, ວັດວາອາຮາມ ແລະ ອື່ນໆ.

**ມາດຕາ 13 (ປັບປຸງ) ລັດຖະສົມບັດ**

ລັດຖະສົມບັດ ແມ່ນ ຊັບສິນທີ່ລັດ ລົງທຶນສ້າງຂຶ້ນ ຫຼື ໄດ້ມາດ້ວຍຄວາມຊອບທຳ, ຕາມກົດໝາຍ ຊຶ່ງປະກອບດ້ວຍ ສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ທີ່ມອບໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເປັນຜູ້ຄຸ້ມຄອງ, ນຳໃຊ້.

ລັດຖະສົມບັດ ປະກອບດ້ວຍ:

1. ໂຄງລ່າງພື້ນຖານ: ລະບົບຊົນລະປະທານ, ລະບົບການຈະລາຈອນ, ລະບົບຂົວ-ທາງ, ລະບົບນ້ຳປະປາ, ລະບົບລະບາຍນ້ຳ, ລະບົບນ້ຳລົ້ນ, ລະບົບໄຟຟ້າ, ລະບົບສະໜອງພະລັງງານ, ລະບົບເຄືອຂ່າຍສື່ສານ, ສະໜາມບິນ, ທ່າເຮືອ, ທ່າບົກ, ສຳນັກງານ, ອາຄານ, ໂຮງໝໍ, ໂຮງຮຽນ, ສະຖານີ, ສວນສາທາລະນະ, ຕະຫຼາດ ແລະ ກິດຈະການກໍ່ສ້າງໂຄງລ່າງພື້ນຖານອື່ນ ຂອງລັດ;

2. ທຶນທີ່ລັດປະກອບເຂົ້າໃນການດຳເນີນທຸລະກິດ, ເງິນຕາ, ພັນທະບັດ ແລະ ວັດຖຸມີຄ່າຂອງລັດ;

3. ພາຫະນະ, ວັດຖຸປະກອນ ຂອງລັດ, ແຮ່ທາດ, ໄມ້, ເຄື່ອງປ່າຂອງດົງ ແລະ ທີ່ດິນ ຂອງລັດ;

4. ຊັບສິນທາງປັນຍາຂອງລັດ ແລະ ສິດທິພິເສດຂອງລັດ;

5. ຊັບສິນດີຈີຕອນຂອງລັດ;

6. ຊັບສິນອື່ນຂອງລັດ.

**ມາດຕາ 14 (ໃໝ່) ການປ່ຽນສາທາລະນະສົມບັດ ເປັນລັດຖະສົມບັດ**

ສາທາລະນະສົມບັດ ສາມາດປ່ຽນເປັນ ລັດຖະສົມບັດ ດ້ວຍການມອບໃຫ້ການຈັດຕັ້ງຂອງລັດ ຫຼື ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຊົ່າ ຫຼື ສຳປະທານຊັບສິນຂອງລັດ ເປັນຕົ້ນ ກິດຈະການພະລັງງານ, ການຂຸດຄົ້ນຊັບພະຍາກອນທຳມະຊາດ, ການພັດທະນາແຫຼ່ງທ່ອງທ່ຽວທຳມະຊາດ.

ການປ່ຽນສາທາລະນະສົມບັດ ເປັນລັດຖະສົມບັດ ຕ້ອງຮັບປະກັນປະສິດທິຜົນ, ຜົນປະໂຫຍດສູງສຸດຂອງຊາດ, ຜົນປະໂຫຍດສ່ວນລວມຂອງປະຊາຊົນ ແລະ ຕ້ອງປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 15 (ໃໝ່) ການປ່ຽນລັດຖະສົມບັດ ເປັນສາທາລະນະສົມບັດ**

ລັດຖະສົມບັດ ສາມາດປ່ຽນເປັນ ສາທາລະນະສົມບັດ ດ້ວຍຮູບການ ເວນຄືນ, ຖອນສິດນຳໃຊ້, ໝົດອາຍຸສັນຍາເຊົ່າ ຫຼື ສຳປະທານ.

## ພາກທີ III
## ການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ, ການພັດທະນາ ແລະ ການສະສາງ ຊັບສິນຂອງລັດ
### ໝວດທີ 1
### ການຄຸ້ມຄອງຊັບສິນຂອງລັດ

**ມາດຕາ 16 (ປັບປຸງ) ການຄຸ້ມຄອງຊັບສິນຂອງລັດ**

ລັດຖະບານແຫ່ງ ສປປ ລາວ ຄຸ້ມຄອງຊັບສິນຂອງລັດ ຢູ່ພາຍໃນ ແລະ ຕ່າງປະເທດ ຢ່າງລວມສູນ ແລະ ເປັນເອກະພາບ ໂດຍມອບໃຫ້ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ຄຸ້ມຄອງຕາມກົດໝາຍ.

ກະຊວງການເງິນ ເປັນຜູ້ຄຸ້ມຄອງລັດຖະສົມບັດ ຢ່າງລວມສູນ ດ້ວຍການຂຶ້ນບັນຊີ, ຂຶ້ນທະບຽນ, ເກັບລາຍຮັບ, ຕີມູນຄ່າຊັບສິນ, ຊື້ ແລະ ສ້າງໃໝ່, ມອບ, ໂອນ, ຫັນຊັບສິນເປັນທຶນ, ແລກປ່ຽນ, ໃຫ້ເຊົ່າ ຫຼື ສຳປະທານ, ເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ, ຂາຍຮຸ້ນ ຫຼື ຖອນຮຸ້ນ ແລະ ປ່ຽນສິດຄຸ້ມຄອງລັດຖະສົມບັດ, ສ່ວນສາທາລະນະສົມບັດ ມອບໃຫ້ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ ຕາມກົດໝາຍທີ່ກ່ຽວຂ້ອງ.

ການນຳໃຊ້ ຫຼື ຖອນຄືນ, ມອບ, ໂອນ, ແລກປ່ຽນ, ຫັນປ່ຽນກຳມະສິດ, ໃຫ້ເຊົ່າ ຫຼື ສຳປະທານ, ເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ, ຂາຍຮຸ້ນ ຫຼື ຖອນຮຸ້ນ ກ່ຽວກັບຊັບສິນຂອງລັດ ໃຫ້ປະຕິບັດຕາມກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 17 (ປັບປຸງ) ການຂຶ້ນບັນຊີຊັບສິນຂອງລັດ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ນຳໃຊ້ງົບປະມານຂອງລັດ ລວມທັງໂຄງການກູ້ຢືມ ຫຼື ຊ່ວຍເຫຼືອລ້າ ແຕ່ສູນກາງລົງຮອດທ້ອງຖິ່ນ ຕ້ອງໄດ້ຂຶ້ນບັນຊີຊັບສິນ ແລະ ເກັບມ້ຽນເອກະສານປະຫວັດຊັບສິນຂອງລັດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ແລ້ວນຳໄປຂຶ້ນບັນຊີລວມສູນ ຢູ່ຂະແໜງການຄຸ້ມຄອງຊັບສິນແຫ່ງລັດຂັ້ນຂອງຕົນ.

ສຳລັບຊັບສິນທີ່ໄດ້ມາຈາກການ ປັບໃໝ, ຮິບ ແລະ ສານຕັດສິນໃຫ້ລັດຄຸ້ມຄອງຊັບສິນທີ່ບໍ່ມີເຈົ້າຂອງ, ຊັບສິນທີ່ຄົ້ນພົບ ພາຍຫຼັງການກວດສອບ ແລະ ກວດກາຈາກພາກສ່ວນທີ່ກ່ຽວຂ້ອງນັ້ນແລ້ວ ໃຫ້ແຈ້ງ ແລະ ຂຶ້ນບັນຊີຢູ່ຂະແໜງການຄຸ້ມຄອງຊັບສິນແຫ່ງລັດຂັ້ນຂອງຕົນ.

ຂັ້ນຕອນຂອງການຂຶ້ນບັນຊີຊັບສິນຂອງລັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 18 ການຂຶ້ນທະບຽນຊັບສິນຂອງລັດ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ນຳໃຊ້ງົບປະມານຂອງລັດ ແຕ່ສູນກາງລົງຮອດທ້ອງຖິ່ນ ຕ້ອງນຳບັນຊີຊັບສິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໄປຂຶ້ນທະບຽນລວມສູນ ຢູ່ຂະແໜງການຄຸ້ມຄອງຊັບສິນແຫ່ງລັດຂັ້ນຂອງຕົນ.

ກະຊວງການເງິນ ເປັນຜູ້ກຳນົດ ລະຫັດ, ເລກທະບຽນ ແລະ ກາໝາຍຊັບສິນ ຂອງລັດແຕ່ລະປະເພດ ເພື່ອຄວາມເປັນເອກະພາບໃນການຂຶ້ນທະບຽນ.

ໃນກໍລະນີທີ່ມີການ ມອບ, ໂອນ ຊັບສິນຂອງເອກະຊົນ ມາເປັນຂອງລັດ ຫຼື ຂອງລັດໄປ ເປັນຂອງເອກະຊົນ ຫຼື ລະຫວ່າງອົງການຈັດຕັ້ງຂອງລັດດ້ວຍກັນນັ້ນ ພາກສ່ວນທີ່ກ່ຽວຂ້ອງຕ້ອງນຳເອົາສັນຍາ ມອບ, ໂອນ ດັ່ງກ່າວ ພ້ອມດ້ວຍເອກະສານຕ່າງໆ ທີ່ກ່ຽວຂ້ອງກັບຊັບສິນນັ້ນໄປຂຶ້ນທະບຽນ ຫຼື ຈົດທະບຽນການມອບ, ໂອນກຳມະສິດ ຫຼື ສິດນຳໃຊ້ ຕາມແຕ່ລະກໍລະນີໃຫ້ຖືກຕ້ອງຕາມກົດໝາຍ.

**ມາດຕາ 19 ເນື້ອໃນການຂຶ້ນທະບຽນ**

ການຂຶ້ນທະບຽນຊັບສິນຂອງລັດ ຕ້ອງໄດ້ບັນທຶກ ຊື່, ເລກທະບຽນ, ລະຫັດ, ປະເພດ, ການໝາຍຊັບສິນ, ຈຸດພິເສດທາງດ້ານເຕັກນິກ, ມູນຄ່າ, ການໄດ້ມາ, ຈຸດປະສົງຂອງການນໍາໃຊ້, ເວລາເລີ່ມນໍາໃຊ້ ແລະ ຜູ້ນໍາໃຊ້. ຖ້າຫາກແມ່ນທີ່ດິນ ຫຼື ເຮືອນ ຍັງຕ້ອງໄດ້ບັນທຶກ ທີ່ຕັ້ງ, ລັກສະນະ ແລະ ເນື້ອທີ່.

**ມາດຕາ 20 (ປັບປຸງ) ການເກັບລາຍຮັບ**

ຂະແໜງການການເງິນ ເປັນຜູ້ເກັບລາຍຮັບຈາກຊັບສິນຂອງລັດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

ຂະແໜງການ ແລະ ການຈັດຕັ້ງ ທີ່ນໍາໃຊ້ງົບປະມານຂອງລັດ ສາມາດເກັບລາຍຮັບຈາກຊັບສິນຂອງລັດ ແຕ່ຕ້ອງໄດ້ຮັບການມອບສິດຈາກ ລັດຖະບານ ຫຼື ຂະແໜງການການເງິນ ຊຶ່ງລາຍຮັບດັ່ງກ່າວ ຕ້ອງມອບເຂົ້າງົບປະມານແຫ່ງລັດຢ່າງລວມສູນ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

**ມາດຕາ 21 (ປັບປຸງ) ການຕີມູນຄ່າຊັບສິນຂອງລັດ**

ຊັບສິນຂອງລັດ ຕ້ອງມີການຕີມູນຄ່າ ຕາມອາຍຸການນໍາໃຊ້, ຕາມມາດຕະຖານເຕັກນິກຂອງຊັບສິນ ແລະ ຕາມກົນໄກຕະຫຼາດໂດຍຄະນະກໍາມະການ ຊຶ່ງປະກອບດ້ວຍ ເຈົ້າໜ້າທີ່ຄຸ້ມຄອງຊັບສິນແຫ່ງລັດ, ຜູ້ຕາງໜ້າຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ການຕີມູນຄ່າຊັບສິນຂອງລັດ ມີຈຸດປະສົງເພື່ອກໍານົດລາຄາ ຊື້, ຂາຍ, ເປັນຂໍ້ມູນໃນເວລາມອບ, ໂອນ, ແລກປ່ຽນ ຕິດຕາມການເພີ່ມຂຶ້ນ ຫຼື ຫຼຸດລົງຂອງຊັບສິນຂອງລັດ, ເພື່ອເອົາເຂົ້າຮຸ້ນ, ຫັນເປັນທຶນ, ຊໍາລະສະສາງ ແລະ ອື່ນໆ.

ການດໍາເນີນການຕີມູນຄ່າຊັບສິນຂອງລັດແຕ່ລະປະເພດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 (ປັບປຸງ) ການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ**

ການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ ຕ້ອງປະຕິບັດຕາມກໍານົດໝາຍ, ມາດຕະຖານ, ລະດັບຂັ້ນກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ ດ້ວຍການເຂົ້າຮ່ວມກວດກາ ຂອງຂະແໜງການການເງິນ ໂດຍສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ.

ແຜນການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ ໃຫ້ນໍາສະເໜີ ກ່ຽວກັບຄວາມຈໍາເປັນ, ເປົ້າໝາຍການນໍາໃຊ້, ພາກສ່ວນທີ່ຄຸ້ມຄອງ ແລະ ນໍາໃຊ້, ຄາດຄະເນຜົນໄດ້ຮັບຈາກການຄຸ້ມຄອງ ແລະ ນໍາໃຊ້ນັ້ນ.

ແຜນການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ ຕ້ອງໄດ້ຈັດເຂົ້າແຜນງົບປະມານແຫ່ງລັດ ຫຼື ງົບປະມານທ້ອງຖິ່ນ ປະຈໍາປີ ໂດຍຜ່ານການຮັບຮອງຈາກສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ.

ການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ ຕ້ອງປະຕິບັດຢ່າງເປີດເຜີຍ, ໂປ່ງໃສ ແລະ ຖືກຕ້ອງຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ. ຂະແໜງການການເງິນ ເປັນຜູ້ຄຸ້ມຄອງການຈັດຕັ້ງປະຕິບັດ ການປະມູນໃນການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ ຕາມຄວາມຮັບຜິດຊອບຂອງຕົນ.

**ມາດຕາ 23 ການມອບ, ໂອນ ລັດຖະສົມບັດ**

ການມອບ, ໂອນ ລັດຖະສົມບັດ ແມ່ນ ການເອົາລັດຖະສົມບັດ ໃຫ້ເປັນກໍາມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍມີການຄົ້ນຄວ້າ, ປະເມີນຜົນ ເພື່ອຮັບປະກັນຄວາມໂປ່ງໃສ, ຜົນປະໂຫຍດສູງສຸດຂອງລັດ ແລະ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 24 (ປັບປຸງ) ການຫັນຊັບສິນເປັນທຶນ**

ການຫັນຊັບສິນເປັນທຶນ ແມ່ນ ການເອົາຊັບສິນຂອງລັດໄປລົງທຶນ ເພື່ອເຮັດໃຫ້ຊັບສິນດັ່ງກ່າວມີການພັດທະນາ, ມີມູນຄ່າເພີ່ມຂຶ້ນ ຫຼື ມີແຫຼ່ງທຶນ ສໍາລັບການພັດທະນາເສດຖະກິດ-ສັງຄົມ ຂອງຊາດຢ່າງໝັ້ນຄົງ.

ຊັບສິນຂອງລັດ ທີ່ອະນຸຍາດຫັນເປັນທຶນ ມີ ດັ່ງນີ້:

1. ທີ່ດິນຂອງລັດ;
2. ສິ່ງກໍ່ສ້າງຂອງລັດ;
3. ຊັບພະຍາກອນແຮ່ທາດ;
4. ຊັບພະຍາກອນນໍ້າ;
5. ຊັບພະຍາກອນປ່າໄມ້;
6. ຊັບສິນອື່ນ ທີ່ກົດໝາຍອະນຸຍາດໃຫ້ຫັນ.

ຊັບສິນຂອງລັດ ທີ່ບໍ່ອະນຸຍາດຫັນເປັນທຶນ ມີ ດັ່ງນີ້:

1. ຊັບສິນທີ່ເປັນມໍລະດົກທາງວັດທະນະທໍາ, ວັດຖຸບູຮານ, ວັດວາອາຮາມ, ປູສະນີຍະສະຖານ, ຫໍພິພິດທະພັນ, ສິ່ງກໍ່ສ້າງທີ່ມີຄວາມໝາຍຄວາມສໍາຄັນທາງດ້ານປະຫວັດສາດ ແລະ ການເມືອງ;
2. ຊັບສິນທີ່ອະນຸລັກໄວ້ ເພື່ອປົກປັກຮັກສາສັດ, ພືດ, ສິ່ງທີ່ມີຊີວິດ ແລະ ສິ່ງທີ່ບໍ່ມີຊີວິດ ລວມທັງສິ່ງແວດລ້ອມທໍາມະຊາດ, ສິ່ງທີ່ມີຄວາມໝາຍຄວາມສໍາຄັນ ແລະ ມີຄຸນຄ່າພິເສດ;
3. ປ່າສະຫງວນ ແລະ ປ່າປ້ອງກັນ ແຫ່ງຊາດ ແລະ ຂອງທ້ອງຖິ່ນ ຍົກເວັ້ນເຂດໂຄງການພັດທະນາໂຄງລ່າງພື້ນຖານ ທີ່ໄດ້ຮັບອະນຸຍາດ;
4. ຊັບສິນທີ່ນໍາໃຊ້ເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ຄວາມລັບຂອງຊາດ;
5. ຊັບສິນທີ່ໄດ້ຮັບຮອງ ຫຼື ກໍາລັງສະເໜີ ເປັນມໍລະດົກໂລກ, ມໍລະດົກແຫ່ງຊາດ ລະດັບຊາດ ແລະ ລະດັບທ້ອງຖິ່ນ;
6. ຊັບສິນທີ່ຍັງມີຂໍ້ຂັດແຍ່ງທາງດ້ານກໍາມະສິດ;
7. ຊັບສິນອື່ນ ທີ່ກົດໝາຍບໍ່ອະນຸຍາດໃຫ້ຫັນ.

ການຫັນຊັບສິນເປັນທຶນ ຕ້ອງສ້າງເປັນແຜນການ, ໂຄງການ ໂດຍໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ, ມີນິຕິກໍາຄຸ້ມຄອງລວມສູນ ເພື່ອຮັບປະກັນການຄົ້ນຄວ້າ, ປະເມີນຜົນ, ການປະມູນເປີດກວ້າງ ຕາມແຕ່ລະກໍລະນີ ແນໃສ່ຮັບປະກັນ ຄວາມໂປ່ງໃສ, ຄວາມໝັ້ນຄົງ ແລະ ຜົນປະໂຫຍດສູງສຸດຂອງຊາດ.

ລັດຖະບານ, ກະຊວງການເງິນ, ອົງການປົກຄອງຂັ້ນແຂວງ ເປັນຜູ້ຄົ້ນຄວ້າ ແລະ ຕົກລົງການຫັນຊັບສິນເປັນທຶນ ຕາມຂອບເຂດສິດທີ່ໄດ້ກໍານົດໄວ້ໃນກົດໝາຍ.

ຊັບສິນທີ່ມີລັກສະນະຍຸດທະສາດ ແລະ ພົວພັນເຖິງຄວາມໝັ້ນຄົງ ຂອງຊາດ ສະພາແຫ່ງຊາດ ເປັນຜູ້ພິຈາລະນາ ຕາມການສະເໜີຂອງລັດຖະບານ.

ຊັບສິນທີ່ມີລັກສະນະຍຸດທະສາດ ແລະ ພົວພັນເຖິງຄວາມໝັ້ນຄົງ ຂອງທ້ອງຖິ່ນ ສະພາປະຊາຊົນຂັ້ນແຂວງ ເປັນຜູ້ພິຈາລະນາ ຕາມການສະເໜີຂອງອົງການປົກຄອງຂັ້ນແຂວງ.

ສໍາລັບຮູບການ, ວິທີການ ແລະ ຂັ້ນຕອນໃນການຫັນຊັບສິນຂອງລັດເປັນທຶນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 25 (ປັບປຸງ) ການແລກປ່ຽນ**

ການແລກປ່ຽນລັດຖະສົມບັດ ແມ່ນ ການເອົາຊັບສິນປະເພດໜຶ່ງ ປ່ຽນກັບຊັບສິນປະເພດດຽວກັນ ຫຼື ຊັບສິນປະເພດອື່ນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

ໃນກໍລະນີ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງການແລກປ່ຽນລັດຖະສົມບັດ ໃຫ້ສ້າງແຜນການແລກປ່ຽນຂອງຕົນ ສະເໜີກະຊວງການເງິນ ຄົ້ນຄວ້າ, ສັງລວມ ເພື່ອນໍາສະເໜີລັດຖະບານ ພິຈາລະນາ.

ໃນການແລກປ່ຽນນັ້ນ ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ປະຕິບັດ ດັ່ງນີ້:

1. ເກັບກຳຂໍ້ມູນຕົວຈິງຂອງຊັບສິນທີ່ຈະແລກປ່ຽນ ເພື່ອນຳມາປະເມີນ;

2. ຄົ້ນຄວ້າວິໄຈຜົນກະທົບຕ່າງໆ, ດ້ານດີ ແລະ ດ້ານອ່ອນ ຂອງການແລກປ່ຽນ;

3. ປະເມີນມູນຄ່າລັດຖະສົມບັດ ແລະ ຊັບສິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຈະແລກປ່ຽນ.

ສຳລັບການຕົກລົງກ່ຽວກັບການແລກປ່ຽນ ໃຫ້ປະຕິບັດຄືກັນກັບການຫັນຊັບສິນເປັນທຶນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

**ມາດຕາ 26 ການໃຫ້ເຊົ່າ ຫຼື ສຳປະທານ**

ການໃຫ້ເຊົ່າ ຫຼື ສຳປະທານຊັບສິນຂອງລັດ ແມ່ນ ການມອບສິດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ຊັບສິນຂອງລັດ ໂດຍມີກຳນົດ ຊຶ່ງຜູ້ເຊົ່າ ຫຼື ຜູ້ສຳປະທານ ມີພັນທະຈ່າຍ ຄ່າເຊົ່າ ຫຼື ຄ່າສຳປະທານ ຕາມທີ່ໄດ້ຕົກລົງກັນ ໂດຍສອດຄ່ອງກັບກົດໝາຍ.

ໄລຍະເວລາການໃຫ້ເຊົ່າ ຫຼື ສຳປະທານ ສາມາດຕໍ່ໄດ້ ແຕ່ສູງສຸດບໍ່ໃຫ້ເກີນກຳນົດເວລາ ທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ການໃຫ້ເຊົ່າ ຫຼື ສຳປະທານ ສາມາດປະຕິບັດໄດ້ ດ້ວຍການປະມູນ ຫຼື ດ້ວຍການເຈລະຈາ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 27 (ປັບປຸງ) ການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ**

ການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ ແມ່ນ ການເອົາຊັບສິນໃດໜຶ່ງຂອງລັດ ເຂົ້າເປັນຮຸ້ນ ຫຼື ຮ່ວມທຶນກັບວິສາຫະກິດໃດໜຶ່ງ ໃນການດຳເນີນທຸລະກິດ ເພື່ອແບ່ງປັນຜົນປະໂຫຍດ ແລະ ພັດທະນາເສດຖະກິດ-ສັງຄົມ.

ຖ້າຊັບສິນທີ່ຈະເອົາເຂົ້າຮຸ້ນ ຫຼື ຮ່ວມທຶນນັ້ນ ຫາກບໍ່ແມ່ນເງິນ ຕ້ອງຕີມູນຄ່າ ໂດຍຄະນະກຳມະການ ທີ່ໄດ້ຮັບການແຕ່ງຕັ້ງ ຈາກລັດຖະບານ ຫຼື ກະຊວງການເງິນ ຕາມແຕ່ລະກໍລະນີ.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າ ແລະ ສະເໜີ ການເອົາຊັບສິນເຂົ້າຮຸ້ນ ຫຼື ຮ່ວມທຶນ ຂອງຂະແໜງການຕົນ ຕໍ່ກະຊວງການເງິນ ເພື່ອຄົ້ນຄວ້າ, ສັງລວມ ແລ້ວນຳສະເໜີລັດຖະບານ ພິຈາລະນາ.

ໃນການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນນັ້ນ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ປະຕິບັດ ດັ່ງນີ້:

1. ເກັບກຳຂໍ້ມູນຕົວຈິງ ກ່ຽວກັບຊັບສິນຂອງລັດທີ່ຈະເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ ເພື່ອນຳມາຕີມູນຄ່າ;

2. ຄົ້ນຄວ້າວິໄຈຜົນກະທົບຕ່າງໆ, ດ້ານດີ ແລະ ດ້ານອ່ອນ ຂອງການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ;

3. ປະເມີນມູນຄ່າຊັບສິນ ແລະ ສະພາບການດຳເນີນທຸລະກິດ ຂອງວິສາຫະກິດ ທີ່ຈະນຳເອົາຊັບສິນຂອງລັດ ເຂົ້າຮຸ້ນ ຫຼື ຮ່ວມທຶນ.

**ມາດຕາ 28 (ໃໝ່) ການຂາຍຮຸ້ນ ຫຼື ຖອນຮຸ້ນ**

ການຂາຍຮຸ້ນ ຫຼື ຖອນຮຸ້ນ ແມ່ນ ການມອບ, ໂອນ ຮຸ້ນຂອງລັດ ສ່ວນໃດໜຶ່ງ ຫຼື ທັງໝົດ ຢູ່ໃນວິສາຫະກິດໃດໜຶ່ງໃຫ້ແກ່ ບຸກຄົນ, ນິຕິບຸກຄົນອື່ນ ເພື່ອຈຸດປະສົງໃນການດຳເນີນທຸລະກິດ, ຮັກສາສະພາບຄ່ອງຂອງການດຳເນີນທຸລະກິດ, ປົກປ້ອງຜົນປະໂຫຍດຂອງລັດ ຈາກການດຳເນີນທຸລະກິດ ທີ່ບໍ່ມີປະສິດທິຜົນ.

ການຂາຍຮຸ້ນ ຫຼື ຖອນຮຸ້ນ ແມ່ນ ກະຊວງການເງິນ ເປັນຜູ້ຄົ້ນຄວ້າພິຈາລະນາ ແລະ ນຳສະເໜີຂໍອະນຸມັດຈາກລັດຖະບານ.

ໃນການຂາຍຮຸ້ນ ຫຼື ຖອນຮຸ້ນ ຂອງລັດ ຢູ່ໃນວິສາຫະກິດໃດໜຶ່ງ ໃຫ້ປະຕິບັດ ດັ່ງນີ້:

1. ຄົ້ນຄວ້າວິໄຈຜົນກະທົບດ້ານດີ, ດ້ານອ່ອນ ແລະ ຜົນປະໂຫຍດຂອງລັດ ຂອງການຂາຍຮຸ້ນ ຫຼື ຖອນຮຸ້ນ;

2. ກຳນົດເປົ້າໝາຍການດຳເນີນທຸລະກິດ ຂອງວິສາຫະກິດ ພາຍຫຼັງມີການ ຂາຍຮຸ້ນ ຫຼື ຖອນຮຸ້ນ;

3. ທ່າອ່ຽງຂອງການດຳເນີນທຸລະກິດ ລວມທັງຖານະການເງິນ ແລະ ຄວາມໜ້າເຊື່ອຖືຂອງຜູ້ຈະຊື້ຮຸ້ນ;

4. ປະເມີນຊັບສິນ ແລະ ສັດສ່ວນປະລິມານການຂາຍຮຸ້ນຂອງລັດ ຕ້ອງໃຫ້ສອດຄ່ອງກັບລະບຽບການ;

5. ປະເມີນຜົນກະທົບດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ໃນໄລຍະສະເພາະໜ້າ ແລະ ຍາວນານ.

ໃນກໍລະນີການຂາຍຮຸ້ນ ຫຼື ຖອນຮຸ້ນ ທີ່ມີມູນຄ່າສູງ, ມີລັກສະນະຍຸດທະສາດ ພົວພັນເຖິງສະຖຽນລະພາບທາງດ້ານເສດຖະກິດ-ການເງິນ ໃຫ້ລັດຖະບານ ສະເໜີສະພາແຫ່ງຊາດ ພິຈາລະນາ.

ຮູບແບບ ແລະ ວິທີການຈັດຕັ້ງປະຕິບັດການຂາຍຮຸ້ນ ຫຼື ຖອນຮຸ້ນ ແຕ່ລະປະເພດ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 29 (ປັບປຸງ) ການປ່ຽນສິດຄຸ້ມຄອງລັດຖະສົມບັດ**

ການປ່ຽນສິດຄຸ້ມຄອງລັດຖະສົມບັດ ແມ່ນ ການນຳເອົາສິດຄຸ້ມຄອງ ລັດຖະສົມບັດ ຂອງອົງການຈັດຕັ້ງໜຶ່ງຂອງລັດ ໄປໃຫ້ອົງການຈັດຕັ້ງອື່ນຂອງລັດ ຄຸ້ມຄອງ.

ກະຊວງການເງິນ ເປັນຜູ້ຕົກລົງກ່ຽວກັບການປ່ຽນສິດຄຸ້ມຄອງລັດຖະສົມບັດ ໃນກໍລະນີ ດັ່ງນີ້:

1. ຊັບສິນຂອງລັດທີ່ນຳໃຊ້ບໍ່ຖືກເປົ້າໝາຍ;
2. ການປ່ຽນສິດຄຸ້ມຄອງ ຈາກບ່ອນເຫຼືອໄປຫາບ່ອນຂາດເຂີນ;
3. ການປ່ຽນສິດຄຸ້ມຄອງຈາກບ່ອນນຳໃຊ້ທີ່ບໍ່ມີປະສິດທິຜົນ ໄປຫາບ່ອນທີ່ມີປະສິດທິຜົນ;
4. ກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສຳລັບການປ່ຽນສິດຄຸ້ມຄອງລັດຖະສົມບັດ ລະຫວ່າງກະຊວງການດ້ວຍກັນ ຕ້ອງໄດ້ຮັບການເຫັນດີຈາກກະຊວງການການເງິນ.

## ໝວດທີ 2
## ການນຳໃຊ້ຊັບສິນຂອງລັດ

**ມາດຕາ 30 (ປັບປຸງ) ການນຳໃຊ້ຊັບສິນຂອງລັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດໄດ້ຮັບສິດນຳໃຊ້ຊັບສິນຂອງລັດ ຕາມກົດໝາຍ.

ການນຳໃຊ້ຊັບສິນຂອງລັດ ຕ້ອງຮັບປະກັນໃຫ້ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍຂອງແຕ່ລະປະເພດຊັບສິນຂອງລັດ.

ການນຳໃຊ້ສາທາລະນະສົມບັດ ແມ່ນເພື່ອຈຸດປະສົງຮັບໃຊ້ສາທາລະນະຊົນ ຊຶ່ງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດໄດ້ຮັບສິດນຳໃຊ້ສາທາລະນະສົມບັດ ດ້ວຍການເຊົ່າ ຫຼື ສຳປະທານ ຕາມກົດໝາຍ.

ການນຳໃຊ້ລັດຖະສົມບັດ ແມ່ນເພື່ອຈຸດປະສົງຮັບໃຊ້ວຽກງານລັດບໍລິຫານວິຊາການ ແລະ ການລົງທຶນຂອງລັດ ຊຶ່ງສາມາດປ່ຽນສິດຄຸ້ມຄອງ ແລະ ນຳໃຊ້ດ້ວຍການໂອນກຳມະສິດ ແລະ ເປັນສິນຄ້າຕາມກົດໝາຍ.

ຊັບສິນຂອງລັດ ຈະບໍ່ ຖືກຍຶດ, ອາຍັດ ຫຼື ຮິບ ຕາມທີ່ກຳນົດໄວ້ໃນປະມວນກົດໝາຍແພ່ງ, ເວັ້ນເສຍແຕ່ພາຫະນະທາງດ້ານການເງິນ ແລະ ຊັບສິ່ງຂອງອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 31 (ປັບປຸງ) ການນຳໃຊ້ສາທາລະນະສົມບັດ**

ການນຳໃຊ້ສາທາລະນະສົມບັດ ທີ່ເກີດຂຶ້ນຕາມທຳມະຊາດ ຕ້ອງຮັບປະກັນ ປະສິດທິພາບ, ປະສິດທິຜົນ, ປະຢັດ ຕາມທິດສີຂຽວ ແລະ ຍືນຍົງ.

ສາທາລະນະສົມບັດ ທີ່ສ້າງຂຶ້ນເພື່ອຮັບໃຊ້ສາທາລະນະ ຕ້ອງນຳໃຊ້ໃຫ້ສອດຄ່ອງກັບເປົ້າໝາຍ, ຈຸດພິເສດ ແລະ ລັກສະນະສະເພາະຂອງແຕ່ລະປະເພດຊັບສິນ, ຮັບປະກັນໃຫ້ສາມາດນຳໃຊ້ໄດ້ຢ່າງມີປະໂຫຍດສູງສຸດ ແລະ ຍາວນານ.

ກະຊວງການທີ່ກ່ຽວຂ້ອງ ຄົ້ນຄວ້າ ສ້າງນິຕິກຳກ່ຽວກັບການນຳໃຊ້ສາທາລະນະສົມບັດແຕ່ລະປະເພດທີ່ນອນໃນຄວາມຮັບຜິດຊອບຂອງຕົນ ແລ້ວນຳສະເໜີລັດຖະບານ ພິຈາລະນາ.

**ມາດຕາ 32 ການນຳໃຊ້ລັດຖະສົມບັດ ເຂົ້າໃນວຽກງານລັດບໍລິຫານວິຊາການ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງນຳໃຊ້ລັດຖະສົມບັດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຂົ້າໃນການເຄື່ອນໄຫວວຽກງານລັດບໍລິຫານວິຊາການ ແລະ ໃຫ້ຖືກຕ້ອງຕາມກົດໝາຍ, ເປົ້າໝາຍ, ລັກສະນະ, ມີປະສິດທິພາບ, ປະສິດທິຜົນ ແລະ ປະຢັດ.

**ມາດຕາ 33 (ປັບປຸງ) ການນຳໃຊ້ລັດຖະສົມບັດ ເຂົ້າໃນການດຳເນີນທຸລະກິດ**

ລັດຖະສົມບັດ ທີ່ມອບໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ເຂົ້າໃນການດຳເນີນທຸລະກິດ ຕ້ອງປະຕິບັດໃຫ້ຖືກຕາມເປົ້າໝາຍການລົງທຶນ, ຕາມບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການລົງທຶນທີ່ໄດ້ຮັບອະນຸມັດ ຫຼື ຕາມທີ່ໄດ້ກຳນົດໄວ້ໃນສັນຍາ, ຮັບປະກັນການດຳເນີນທຸລະກິດ ໃຫ້ມີປະສິດທິຜົນ ແລະ ປະຕິບັດພັນທະທາງດ້ານການເງິນໃຫ້ລັດ ຢ່າງເຂັ້ມງວດຕາມກົດໝາຍ.

**ມາດຕາ 34 (ປັບປຸງ) ການນຳໃຊ້ຊັບສິນທີ່ໄດ້ຈາກໂຄງການກູ້ຢືມ ຫຼື ຊ່ວຍເຫຼືອລ້າ**

ຊັບສິນ ທີ່ລັດໄດ້ຮັບຈາກໂຄງການກູ້ຢືມ ຫຼື ຊ່ວຍເຫຼືອລ້າຈາກພາຍໃນ ແລະ ຕ່າງປະເທດ ຕ້ອງນຳໃຊ້ໃຫ້ຖືກຕ້ອງຕາມເປົ້າໝາຍຂອງໂຄງການ, ມີການປົກປັກຮັກສາ, ນຳໃຊ້ຢ່າງປະຢັດ, ມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນ ທີ່ເປັນເຈົ້າຂອງໂຄງການ ຕ້ອງສະຫຼຸບລາຍງານກ່ຽວກັບຊັບສິນທັງໝົດຂອງໂຄງການ ໃຫ້ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ກ່ອນໂຄງການຈະສິ້ນສຸດລົງ ສາມເດືອນ ເພື່ອແຕ່ງຕັ້ງຄະນະກຳມະການກວດກາຊັບສິນຂອງໂຄງການ. ຊັບສິນຂອງໂຄງການປະເພດສິ່ງກໍ່ສ້າງ, ພາຫະນະ ແລະ ວັດຖຸປະກອນ ທີ່ໄດ້ນຳໃຊ້ໃນໄລຍະປະຕິບັດໂຄງການແລ້ວນັ້ນ ຕ້ອງຕີມູນຄ່າ ແລະ ຂຶ້ນບັນຊີຄືນໃໝ່, ສຳລັບວັດຖຸມີຄ່າ ແລະ ເງິນ ທີ່ຍັງເຫຼືອ ຕ້ອງມອບເຂົ້າງົບປະມານແຫ່ງລັດ.

ພາຍຫຼັງສິ້ນສຸດໂຄງການແລ້ວ ເຈົ້າຂອງໂຄງການ ຕ້ອງມອບຊັບສິນຂອງໂຄງການທັງໝົດໃຫ້ແກ່ກະຊວງການເງິນ ເພື່ອຄຸ້ມຄອງ ແລະ ສະເໜີແຜນການນຳໃຊ້ ໃຫ້ລັດຖະບານຕົກລົງ.

**ມາດຕາ 35 (ປັບປຸງ) ການນຳໃຊ້ຊັບສິນຂອງລັດ ເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ການນຳໃຊ້ຊັບສິນຂອງລັດ ເຂົ້າໃນວຽກງານທົ່ວໄປຂອງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ສຳລັບການນຳໃຊ້ຊັບສິນຂອງລັດ ທີ່ພົວພັນເຖິງວຽກງານວິຊາສະເພາະ ຫຼື ຄວາມລັບ ຂອງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 36 ການນຳໃຊ້ຊັບສິນຂອງລັດຢູ່ຕ່າງປະເທດ**

ການນຳໃຊ້ຊັບສິນຂອງລັດຢູ່ຕ່າງປະເທດ ໃຫ້ປະຕິບັດຕາມກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ, ປະຕິບັດຢ່າງສອດຄ່ອງກັບນະໂຍບາຍການຕ່າງປະເທດ ແລະ ກົດໝາຍຂອງປະເທດທີ່ຊັບສິນຂອງລັດຕັ້ງຢູ່.

**ມາດຕາ 37 (ປັບປຸງ) ການຖອນຄືນຊັບສິນຂອງລັດ**

ຊັບສິນຂອງລັດ ທີ່ມອບໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ ຈະຖືກຖອນຄືນໃນກໍລະນີ ດັ່ງນີ້:

1. ໝົດໜ້າທີ່ຕຳແໜ່ງໃນການນຳໃຊ້ ຫຼື ບໍ່ຢູ່ໃນເປົ້າໝາຍການນຳໃຊ້;
2. ບໍ່ຕ້ອງການນຳໃຊ້, ນຳໃຊ້ບໍ່ຖືກເປົ້າໝາຍ, ນຳໃຊ້ບໍ່ມີປະສິດທິຜົນ;
3. ເກີນກຳນົດໝາຍນຳໃຊ້ ຫຼື ສິ້ນສຸດໂຄງການ;
4. ຍົກເລີກສັນຍາເຊົ່າ ຫຼື ສຳປະທານ;
5. ຍຸບເລີກວິສາຫະກິດຂອງລັດ ຫຼື ສິ້ນສຸດການດຳເນີນທຸລະກິດ;
6. ຖອນຮຸ້ນຂອງລັດ;

7. ນໍາໃຊ້ບໍ່ຖືກຕ້ອງ ຕາມກົດໝາຍ.

ຂະແໜງການການເງິນ ຄົ້ນຄວ້າ ແລະ ນໍາສະເໜີຕໍ່ລັດຖະບານ ຫຼື ອົງການປົກຄອງທ້ອງຖິ່ນ ຂັ້ນທີ່ມີສິດ ເພື່ອພິຈາລະນາຖອນຄືນຊັບສິນຂອງລັດ.

## ໝວດທີ 3
## ການປົກປັກຮັກສາ ແລະ ການພັດທະນາຊັບສິນຂອງລັດ

**ມາດຕາ 38 ພັນທະໃນການປົກປັກຮັກສາ ແລະ ການພັດທະນາຊັບສິນຂອງລັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ ມີພັນທະປົກປັກຮັກສາ, ພັດທະນາ, ຟື້ນຟູ ຫຼື ສ້ອມແປງໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ຕົກເຮ່ຍເສຍຫາຍ ແລະ ເສື່ອມຄຸນນະພາບ ຕາມມາດຕະຖານເຕັກນິກຂອງແຕ່ລະປະເພດຊັບສິນ.

**ມາດຕາ 39 ການຂຶ້ນແຜນປົກປັກຮັກສາ ແລະ ພັດທະນາຊັບສິນຂອງລັດ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ໄດ້ຮັບສິດຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດເຂົ້າໃນວຽກງານລັດບໍລິຫານວິຊາການ ມີໜ້າທີ່ຂຶ້ນແຜນປົກປັກຮັກສາ, ພັດທະນາ, ຟື້ນຟູ ຫຼື ສ້ອມແປງຊັບສິນດັ່ງກ່າວ ເພື່ອເອົາເຂົ້າແຜນງົບປະມານແຫ່ງລັດ ຕາມກົດໝາຍ.

## ໝວດທີ 4
## ການສະສາງຊັບສິນຂອງລັດ

**ມາດຕາ 40 (ປັບປຸງ) ການສະສາງຊັບສິນຂອງລັດ**

ການສະສາງຊັບສິນຂອງລັດ ແມ່ນ ການຊີ້ຂາດຊັບສິນຂອງລັດ ດ້ວຍການຂາຍ, ການຮື້ ຖອນ ແລະ ການທໍາລາຍ.

ຊັບສິນຂອງລັດ ຈະຖືກສະສາງໃນກໍລະນີ ດັ່ງນີ້:

1. ໝົດອາຍຸການນໍາໃຊ້ ແລະ ບໍ່ຕ້ອງການນໍາໃຊ້;
2. ເປ່ເພບໍ່ສາມາດນໍາໃຊ້ໄດ້ ຫຼື ສ້ອມແປງກໍບໍ່ມີປະສິດທິຜົນ;
3. ເສື່ອມຄຸນໄວ;
4. ຕິດພັນກັບອະສັງຫາລິມະຊັບ ຊຶ່ງຕ້ອງໄດ້ຍົກຍ້າຍ, ຮື້ຖອນອອກຕາມການຕົກລົງຂອງອົງການທີ່ມີສິດອໍານາດ;
5. ຊັບພະຍາກອນທໍາມະຊາດ ທີ່ໄດ້ຈາກການ ຍຶດ, ອາຍັດ ແລະ ຮິບ ເຊັ່ນ ໄມ້, ແຮ່ທາດ, ເຄື່ອງປ່າຂອງດົງ ແລະ ອື່ນໆ;
6. ສະສາງຕາມການຕົກລົງຂອງລັດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ລາຍໄດ້ຈາກການສະສາງຊັບສິນຂອງລັດ ຕ້ອງມອບເຂົ້າງົບປະມານແຫ່ງລັດ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ຕາມກົດໝາຍ.

**ມາດຕາ 41 ການຂາຍຊັບສິນຂອງລັດ**

ການຂາຍຊັບສິນຂອງລັດ ຕ້ອງໄດ້ປະເມີນລາຄາໂດຍຄະນະກໍາມະການທີ່ກ່ຽວຂ້ອງ ແລະ ຕ້ອງດໍາເນີນຕາມຂັ້ນຕອນການປະມູນແບບເປີດກວ້າງ, ໂປ່ງໃສ, ຍຸຕິທໍາ, ຮັບປະກັນຜົນປະໂຫຍດສູງສຸດຂອງລັດ ແລະ ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 42 (ປັບປຸງ) ການຮື້ ຖອນ ຊັບສິນຂອງລັດ**

ການຮື້ ຖອນ ຊັບສິນຂອງລັດ ແມ່ນ ການຍົກຍ້າຍ ຫຼື ທັບມ້າງສິ່ງກໍ່ສ້າງຂອງລັດ ຊຶ່ງຈະດຳເນີນໄດ້ໃນກໍລະນີ ດັ່ງນີ້:

1. ການປະຕິບັດຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ;
2. ສິ່ງກໍ່ສ້າງຂອງລັດ ທີ່ມີການເປ່ເພ, ຊຸດໂຊມ ຫຼື ບໍ່ໄດ້ມາດຕະຖານເຕັກນິກ.

ການຮື້ ຖອນ ຕ້ອງມີການກວດກາ ແລະ ເຫັນດີຈາກຂະແໜງການການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ສຳລັບວັດຖຸ ທີ່ຍັງມີຄ່າຈາກການຮື້ ຖອນນັ້ນ ຕ້ອງນຳມາໃຊ້ຄືນໃຫ້ໝົດຄຸນຄ່າຂອງຊັບສິນດັ່ງກ່າວ ຫຼື ຂາຍອອກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້.

**ມາດຕາ 43 ການທຳລາຍຊັບສິນຂອງລັດ**

ຊັບສິນຂອງລັດ ທີ່ບໍ່ສາມາດຮັກສາໄວ້ ເນື່ອງຈາກໝົດຄຸນຄ່າການນຳໃຊ້, ສິ່ງຜິນກະທົບຕໍ່ ຊີວິດ, ສັງຄົມ ແລະ ທຳລາຍສິ່ງແວດລ້ອມ ຕ້ອງທຳລາຍ ໂດຍປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

## ພາກທີ IV
## ລາຍຮັບຈາກຊັບສິນຂອງລັດ

**ມາດຕາ 44 ລາຍຮັບຈາກຊັບສິນຂອງລັດ**

ລາຍຮັບຈາກຊັບສິນຂອງລັດ ແມ່ນ ລາຍຮັບທີ່ເກີດຂຶ້ນຈາກການນຳໃຊ້ຊັບສິນຂອງລັດ ຊຶ່ງຕ້ອງໄດ້ ລວມສູນເຂົ້າເປັນງົບປະມານແຫ່ງລັດ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

**ມາດຕາ 45 (ປັບປຸງ) ແຫຼ່ງລາຍຮັບຈາກຊັບສິນຂອງລັດ**

ແຫຼ່ງລາຍຮັບຈາກຊັບສິນຂອງລັດ ມີ ດັ່ງນີ້:

1. ການໃຫ້ເຊົ່າ ຫຼື ສຳປະທານ ຊັບສິນຂອງລັດ;
2. ຄ່າຊັບພະຍາກອນທຳມະຊາດ, ຄ່າພາກຫຼວງ, ຄ່າບິນຜ່ານ, ຄ່າຄື້ນຄວາມຖີ່, ຄ່າເລກໝາຍໂທລະສັບ, ຄ່າລະຫັດຊື່ອິນເຕີເນັດ, ຄ່າລະຫັດຊື່ໄປສະນີ, ຄ່າວົງໂຄຈອນດາວທຽມ, ຄ່າຊັບສິນທາງປັນຍາຂອງລັດ ແລະ ສິດທິພິເສດຂອງລັດ;
3. ການຂາຍ, ການແລກປ່ຽນ, ການທົດແທນ, ການເວນຄືນ, ການມອບ, ໂອນໃຫ້ລັດລ້າ ແລະ ຊັບສິນທີ່ບໍ່ມີເຈົ້າຂອງ ຫຼື ມູນມໍຣະດົກທີ່ບໍ່ມີສາຍຍາດສືບທອດ;
4. ກອງທຶນຂອງລັດ ແລະ ການຊ່ວຍເຫຼືອລ້າຈາກພາຍໃນ ແລະ ຕ່າງປະເທດ;
5. ການປັນຜົນກຳໄລ ແລະ ການຂາຍຮຸ້ນຂອງລັດຖະບານ;
6. ຊັບສິນດີຈິຕອນ ຫຼື ສະກຸນເງິນດີຈິຕອນ;
7. ຊັບສິນຂອງລັດ ທີ່ເກີດຂຶ້ນໂດຍບັງເອີນ ຫຼື ຊົ່ວຄາວ ເປັນຕົ້ນ ການນຳໃຊ້ທີ່ດິນສາທາລະນະ ເພື່ອບໍລິການຂາຍເຄື່ອງທົ່ວໄປ, ການຂາຍເຄື່ອງໃນຍາມບຸນເປັນການຊົ່ວຄາວ;
8. ຊັບສິນທີ່ໄດ້ມາຈາກຜົນການກວດສອບ ແລະ ກວດກາ;
9. ຄ່າທຳນຽມ ແລະ ຄ່າບໍລິການ ທີ່ນຳໃຊ້ຊັບສິນຂອງລັດ;
10. ການຮິບ, ການຂາຍຊັບທີ່ຖືກຮິບ, ການປັບໃໝ ຕາມກົດໝາຍ;
11. ລາຍຮັບອື່ນ ຈາກຊັບສິນຂອງລັດ.

ທຸກແຫຼ່ງລາຍຮັບຈາກຊັບສິນຂອງລັດ ຕ້ອງມອບເຂົ້າງົບປະມານແຫ່ງລັດຢ່າງລວມສູນ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 46 (ປັບປຸງ) ຂໍ້ຫ້າມສໍາລັບພະນັກງານ ຫຼື ເຈົ້າໜ້າທີ່ ຄຸ້ມຄອງຊັບສິນຂອງລັດ**

ຫ້າມພະນັກງານ ຫຼື ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ມີພຶດຕິກໍາ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ, ກິດໜ່ວງຖ່ວງດຶງ, ປະລະໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ;

2. ກໍານົດບໍລິມາດ ແລະ ລາຄາຊັບສິນຂອງລັດ ບໍ່ຖືກຕ້ອງຕາມກົດໝາຍ ຊຶ່ງເຮັດໃຫ້ລັດເສຍຜົນປະໂຫຍດ;

3. ປົກປ້ອງ ຫຼື ສົມຮູ້ຮ່ວມຄິດ ກັບຜູ້ດໍາເນີນທຸລະກິດ;

4. ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ຂັດຂວາງ, ຮັບສິນບົນ, ກໍ່ຄວາມເສຍຫາຍຕໍ່ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ຂອງລັດ;

5. ປອມແປງໃບເກັບເງິນ, ໃບຮັບເງິນ ຫຼື ເອກະສານອື່ນ, ຊຸກເຊື່ອງ, ສັບປ່ຽນປະລິມານ ຫຼື ຄຸນນະພາບຂອງຊັບສິນ;

6. ນໍາເອົາເງິນລາຍຮັບຈາກຊັບສິນຂອງລັດ ທີ່ເກັບໄດ້ມານໍາໃຊ້ສ່ວນຕົວ, ຊັກຊ້າໃນການມອບເຂົ້າງົບປະມານແຫ່ງລັດ ຕາມກໍານົດເວລາ ຫຼື ມອບບໍ່ຄົບຖ້ວນ;

7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 47 ຂໍ້ຫ້າມສໍາລັບ ຜູ້ໄດ້ຮັບສິດຄຸ້ມຄອງ ແລະ ນໍາໃຊ້ ຊັບສິນຂອງລັດ**

ຫ້າມຜູ້ໄດ້ຮັບສິດຄຸ້ມຄອງ ແລະ ນໍາໃຊ້ ຊັບສິນຂອງລັດ ມີພຶດຕິກໍາ ດັ່ງນີ້:

1. ທໍາລາຍຂໍ້ມູນຫຼັກຖານ, ປອມແປງເອກະສານ, ປອມແປງມາດຕະຖານເຕັກນິກ, ສັບປ່ຽນປະລິມານ ຫຼື ຄຸນນະພາບຂອງຊັບສິນ, ປົດບັງການກະທໍາຜິດ;

2. ປົດບັງລາຍຮັບ ແລະ ການມອບພັນທະກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ;

3. ໃຫ້ສິນບົນ ຫຼື ຄ່າຈ້າງ ແກ່ພະນັກງານ ຫຼື ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ຫຼື ສົມຮູ້ຮ່ວມຄິດເອົາຊັບສິນຂອງລັດ;

4. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ຂັດຂວາງ, ໝິ່ນປະໝາດ ແລະ ທໍາຮ້າຍຮ່າງກາຍພະນັກງານ ຫຼື ເຈົ້າໜ້າທີ່ ຄຸ້ມຄອງຊັບສິນຂອງລັດ;

5. ເອົາຊັບສິນຂອງລັດ ມາເປັນກໍາມະສິດສ່ວນຕົວ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

6. ທວງເອົາ ຫຼື ຮຽກຮ້ອງຄ່າຕອບແທນເກີນກວ່າຄວາມເປັນຈິງ ໃນກໍລະນີທີ່ລັດເວນຄືນ;

7. ເລີ່ນເລີ້ ແລະ ປະລະໜ້າທີ່ ຫຼື ຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ ທີ່ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຊັບສິນຂອງລັດ;

8. ນໍາໃຊ້ຊັບສິນຂອງລັດ ບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ມາດຕະຖານເຕັກນິກ;

9. ຊື້ ຂາຍ, ແລກປ່ຽນ, ມອບ, ໂອນ, ເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ ແລະ ນໍາໄປຄໍ້າປະກັນໂດຍບໍ່ຖືກຕ້ອງຕາມກົດໝາຍ;

10. ເອົາຊັບສິນຂອງໂຄງການ ທີ່ໄດ້ສິ້ນສຸດໂຄງການແລ້ວ ໄປນໍາໃຊ້ກ່ອນການອະນຸຍາດ;

11. ເອົາລາຍຮັບຈາກຊັບສິນຂອງລັດ ໄປນໍາໃຊ້ນອກລະບົບງົບປະມານ;

12. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 48 (ປັບປຸງ) ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ຊັບສິນຂອງລັດໂດຍບໍ່ໄດ້ຮັບອະນຸຍາດ;
2. ປອມແປງເອກະສານ ເພື່ອຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ;
3. ບຸກລຸກ, ທຳລາຍ ຫຼື ສ້າງຄວາມເສຍຫາຍ ແກ່ຊັບສິນຂອງລັດ;
4. ຊື້ ຂາຍ, ເຄື່ອນຍ້າຍ ຊັບສິນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ລັກລອບຊັບສິນຂອງລັດ;
5. ປົກປັງ, ໃສ່ຮ້າຍ, ບິດເບືອນຄວາມເປັນຈິງ ໃນການປະຕິບັດໜ້າທີ່ ຂອງພະນັກງານ ຫຼື ເຈົ້າໜ້າທີ່ ຄຸ້ມຄອງຊັບສິນຂອງລັດ;
6. ຈັບຈອງ, ຊອກຄົ້ນ, ສຳຫຼວດ, ຂຸດຄົ້ນ ຊັບສິນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
7. ລະເມີດລິຂະສິດ ຫຼື ສິດທິພິເສດຂອງລັດ;
8. ປອມແປງທະບຽນ, ລະຫັດ, ກາໝາຍ ຊັບສິນຂອງລັດ;
9. ປົກປັງ ລາຍຮັບ ແລະ ຫຼົບຫຼີກພັນທະ ກ່ຽວກັບຊັບສິນຂອງລັດ;
10. ໃຫ້ສິນບົນ ຫຼື ຄ່າຈ້າງແກ່ພະນັກງານ ຫຼື ເຈົ້າໜ້າທີ່ ຄຸ້ມຄອງຊັບສິນຂອງລັດ ຫຼື ສົມຮູ້ຮ່ວມຄິດເອົາຊັບສິນຂອງລັດ;
11. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ຂັດຂວາງການປະຕິບັດໜ້າທີ່, ໝິ່ນປະໝາດ ຫຼື ທຳຮ້າຍຮ່າງກາຍພະນັກງານ ຫຼື ເຈົ້າໜ້າທີ່ ຄຸ້ມຄອງຊັບສິນຂອງລັດ;
12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VI
## ການຄຸ້ມຄອງ ແລະ ກວດກາ ວຽກງານຊັບສິນຂອງລັດ
### ໝວດທີ 1
### ການຄຸ້ມຄອງວຽກງານຊັບສິນຂອງລັດ

**ມາດຕາ 49 (ປັບປຸງ) ອົງການຄຸ້ມຄອງວຽກງານຊັບສິນຂອງລັດ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຊັບສິນຂອງລັດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຊັບສິນຂອງລັດ ປະກອບດ້ວຍ:

1. ກະຊວງການເງິນ;
2. ພະແນກການເງິນຂັ້ນແຂວງ;
3. ຫ້ອງການການເງິນຂັ້ນເມືອງ;
4. ໜ່ວຍງານເສດຖະກິດ-ການເງິນບ້ານ.

**ມາດຕາ 50 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານຊັບສິນຂອງລັດ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊັບສິນຂອງລັດ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊັບສິນຂອງລັດ ເປັນ ແຜນການ, ແຜນງານ, ໂຄງການ ລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຊັບສິນຂອງລັດ ໃນຂອບເຂດທົ່ວປະເທດ;

4. ຊີ້ນຳ, ຕິດຕາມ ການຂຶ້ນບັນຊີ, ການຂຶ້ນທະບຽນ ແລະ ການນຳໃຊ້ ລັດຖະສົມບັດ ໃນຂອບເຂດທົ່ວປະເທດ;

5. ພິຈາລະນາ ການສະເໜີແຜນການ ຊື້ໃໝ່, ການກໍ່ສ້າງ, ການສ້ອມແປງ, ການສະສາງຂອງການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນ ທີ່ນຳໃຊ້ງົບປະມານຂອງລັດ;

6. ຄົ້ນຄວ້າກ່ຽວກັບ ການຊື້, ການສ້າງໃໝ່, ການມອບ, ການໂອນ, ການຫັນຊັບສິນເປັນທຶນ, ການແລກປ່ຽນ, ການໃຫ້ເຊົ່າ ຫຼື ສຳປະທານ, ການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ, ການຂາຍຮຸ້ນ ຫຼື ຖອນຮຸ້ນ ແລະ ການປ່ຽນສິດຄຸ້ມຄອງ ເພື່ອນຳສະເໜີລັດຖະບານ ພິຈາລະນາ;

7. ອະນຸຍາດການນຳໃຊ້, ການມອບ, ໂອນ, ການປ່ຽນສິດຄຸ້ມຄອງ, ການສະສາງ, ການຖອນຄືນ, ການໃຫ້ເຊົ່າ ຫຼື ສຳປະທານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

8. ສ້າງ, ຄຸ້ມຄອງ, ຕິດຕາມ ແລະ ຈັດຕັ້ງປະຕິບັດແຜນການເກັບລາຍຮັບຈາກຊັບສິນຂອງລັດ ເຂົ້າງົບປະມານແຫ່ງລັດ;

9. ຄຸ້ມຄອງວຽກງານຈັດຊື້-ຈັດຈ້າງ, ການສະສາງ ຊັບສິນຂອງລັດ ຕາມຄວາມຮັບຜິດຊອບຂອງຕົນ;

10. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ລະບົບຖານຂໍ້ມູນ ກ່ຽວກັບຊັບສິນຂອງລັດ;

11. ຊີ້ນຳ ແລະ ຕິດຕາມການເຄື່ອນໄຫວວຽກງານຂອງຂະແໜງການຄຸ້ມຄອງຊັບສິນແຫ່ງລັດ;

12. ບຳລຸງສ້າງ, ຍົກລະດັບຄວາມຮູ້ ຄວາມສາມາດ ແລະ ຄຸນທາດການເມືອງ ໃຫ້ບຸກຄະລາກອນຂອງຂະແໜງການຄຸ້ມຄອງຊັບສິນແຫ່ງລັດ;

13. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຄຸ້ມຄອງຊັບສິນຂອງລັດ;

14. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊັບສິນຂອງລັດ;

15. ພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງຊັບສິນຂອງລັດ;

16. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຊັບສິນຂອງລັດ ຕໍ່ລັດຖະບານຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 51 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກການເງິນຂັ້ນແຂວງ**

ໃນການຄຸ້ມຄອງວຽກງານຊັບສິນຂອງລັດ ພະແນກການເງິນຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊັບສິນຂອງລັດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊັບສິນຂອງລັດ;

3. ຊີ້ນຳ, ຕິດຕາມ ແລະ ຄຸ້ມຄອງ ການຂຶ້ນບັນຊີ, ການຂຶ້ນທະບຽນ ແລະ ການນຳໃຊ້ລັດຖະສົມບັດ;

4. ຄົ້ນຄວ້າ ການສະເໜີແຜນການ ຊື້ໃໝ່, ກໍ່ສ້າງ, ສ້ອມແປງ, ສະສາງ ຂອງພະແນກການ ແລະ ການຈັດຕັ້ງອື່ນ ທີ່ນຳໃຊ້ງົບປະມານຂອງລັດ;

5. ຄົ້ນຄວ້າ ກ່ຽວກັບການນຳໃຊ້, ການຊື້, ການສ້າງໃໝ່, ການມອບ, ການໂອນ, ການແລກປ່ຽນ, ການໃຫ້ເຊົ່າ ຫຼື ສຳປະທານ ແລະ ການປ່ຽນສິດຄຸ້ມຄອງ ເພື່ອນຳສະເໜີອົງການປົກຄອງຂັ້ນແຂວງ ພິຈາລະນາ;

6. ຄຸ້ມຄອງ, ຕິດຕາມ ແລະ ຈັດຕັ້ງປະຕິບັດແຜນການເກັບລາຍຮັບຈາກຊັບສິນຂອງລັດ ເຂົ້າງົບປະມານແຫ່ງລັດ;

7. ຄຸ້ມຄອງວຽກງານຈັດຊື້-ຈັດຈ້າງ, ການສະສາງ ຊັບສິນຂອງລັດ;

8. ຄຸ້ມຄອງ ແລະ ນຳໃຊ້ ລະບົບຖານຂໍ້ມູນ ກ່ຽວກັບຊັບສິນຂອງລັດ;

9. ຊີ້ນຳ ແລະ ຕິດຕາມການເຄື່ອນໄຫວວຽກງານຂອງຂະແໜງຄຸ້ມຄອງຊັບສິນແຫ່ງລັດ;

10. ສະເໜີ ສ້າງ, ຍົກລະດັບຄວາມຮູ້ ຄວາມສາມາດ ແລະ ຄຸນທາດການເມືອງ ໃຫ້ບຸກຄະລາກອນຂອງຂະແໜງຄຸ້ມຄອງຊັບສິນແຫ່ງລັດ;

11. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຄຸ້ມຄອງຊັບສິນຂອງລັດ;

12. ປະສານສົມທົບກັບພະແນກການ, ອົງການ ແລະ ອົງການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊັບສິນຂອງລັດ;

13. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງຊັບສິນຂອງລັດ ຕາມການມອບໝາຍ;

14. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຊັບສິນຂອງລັດ ຕໍ່ອົງການປົກຄອງຂັ້ນແຂວງ ແລະ ກະຊວງການເງິນ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການການເງິນຂັ້ນເມືອງ**

ໃນການຄຸ້ມຄອງວຽກງານຊັບສິນຂອງລັດ ຫ້ອງການການເງິນຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊັບສິນຂອງລັດ;

2. ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຊັບສິນຂອງລັດ;

3. ຄຸ້ມຄອງ ການຂຶ້ນບັນຊີ, ການຂຶ້ນທະບຽນ ແລະ ການນຳໃຊ້ລັດຖະສົມບັດ;

4. ຄົ້ນຄວ້າ ການສະເໜີແຜນການ ຊື້ໃໝ່, ກໍ່ສ້າງ, ສ້ອມແປງ, ສະສາງ ຂອງຫ້ອງການ ແລະ ການຈັດຕັ້ງອື່ນ ທີ່ນຳໃຊ້ງົບປະມານຂອງລັດ;

5. ຄົ້ນຄວ້າ ກ່ຽວກັບການຊື້, ການສ້າງໃໝ່, ການສ້ອມແປງ ແລະ ການສະສາງ ເພື່ອນຳສະເໜີອົງການປົກຄອງຂັ້ນເມືອງ ພິຈາລະນາ;

6. ຄຸ້ມຄອງ, ຕິດຕາມ ແລະ ຈັດຕັ້ງປະຕິບັດແຜນການເກັບລາຍຮັບຈາກຊັບສິນຂອງລັດ ເຂົ້າງົບປະມານແຫ່ງລັດ;

7. ຄຸ້ມຄອງວຽກງານຈັດຊື້-ຈັດຈ້າງ, ສ້ອມແປງ ແລະ ສະສາງ ຊັບສິນຂອງລັດ;

8. ນຳໃຊ້ ລະບົບຖານຂໍ້ມູນ ກ່ຽວກັບຊັບສິນຂອງລັດ;

9. ຊີ້ນຳ ແລະ ຕິດຕາມການເຄື່ອນໄຫວວຽກງານຂອງໜ່ວຍງານຄຸ້ມຄອງຊັບສິນແຫ່ງລັດ;

10. ສະເໜີ ສ້າງ, ຍົກລະດັບຄວາມຮູ້ຄວາມສາມາດ ແລະ ຄຸນທາດການເມືອງ ໃຫ້ບຸກຄະລາກອນຂອງໜ່ວຍງານຄຸ້ມຄອງຊັບສິນແຫ່ງລັດ;

11. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຄຸ້ມຄອງຊັບສິນຂອງລັດ;

12. ປະສານສົມທົບກັບຫ້ອງການ, ອົງການ ແລະ ອົງການປົກຄອງບ້ານ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊັບສິນຂອງລັດ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຊັບສິນຂອງລັດ ຕໍ່ອົງການປົກຄອງຂັ້ນເມືອງ ແລະ ພະແນກການເງິນຂັ້ນແຂວງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 53 (ປັບປຸງ) ສິດ ແລະ ໜ້າທີ່ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ໃນການຄຸ້ມຄອງວຽກງານຊັບສິນຂອງລັດ ໜ່ວຍງານເສດຖະກິດ-ການເງິນບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊັບສິນຂອງລັດ;
2. ເກັບກຳ, ຂຶ້ນບັນຊີ ຊັບສິນຂອງລັດ;
3. ຈັດເກັບລາຍຮັບຈາກຊັບສິນຂອງລັດ ມອບເຂົ້າງົບປະມານແຫ່ງລັດ ຕາມການແບ່ງຂັ້ນຄຸ້ມຄອງ;
4. ປະສານສົມທົບກັບພາກສ່ວນອື່ນ ໃນການເຄື່ອນໄຫວວຽກງານຄຸ້ມຄອງຊັບສິນຂອງລັດ;
5. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ແກ່ໜ່ວຍງານຄຸ້ມຄອງຊັບສິນແຫ່ງລັດ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານຄຸ້ມຄອງຊັບສິນຂອງລັດ;
6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຊັບສິນຂອງລັດ ຕໍ່ຫ້ອງການການເງິນຂັ້ນເມືອງ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 54 (ປັບປຸງ) ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ປະສານສົມທົບກັບຂະແໜງການການເງິນຂັ້ນຂອງຕົນ ໃນການຄຸ້ມຄອງວຽກງານຊັບສິນຂອງລັດ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ອົງການກວດກາວຽກງານຊັບສິນຂອງລັດ

**ມາດຕາ 55 (ປັບປຸງ) ອົງການກວດກາວຽກງານຊັບສິນຂອງລັດ**

ອົງການກວດກາວຽກງານຊັບສິນຂອງລັດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານຊັບສິນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 56 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານຊັບສິນຂອງລັດ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ, ຈຸດປະສົງ ແລະ ເປົ້າໝາຍ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ;
2. ການຈັດຕັ້ງປະຕິບັດຂໍ້ຜູກພັນ ແລະ ເນື້ອໃນອື່ນຂອງສັນຍາ ລວມທັງເອກະສານທີ່ພົວພັນກັບການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ;
3. ການຈັດຕັ້ງປະຕິບັດແຜນການ ກ່ຽວກັບການຄຸ້ມຄອງ, ການນຳໃຊ້, ການເກັບລາຍຮັບ, ການປົກປັກຮັກສາ ແລະ ການພັດທະນາຊັບສິນຂອງລັດ;
4. ເນື້ອໃນອື່ນທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 57 ຮູບການການກວດກາ**

ການກວດກາຊັບສິນຂອງລັດ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການກວດກາວຽກງານຊັບສິນຂອງລັດນັ້ນ ຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງ ຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 3
## ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ

**ມາດຕາ 58 (ປັບປຸງ) ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ**

ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ແມ່ນ ພະນັກງານທີ່ສັງກັດຢູ່ໃນຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ທີ່ຖືກແຕ່ງຕັ້ງໂດຍລັດຖະມົນຕີກະຊວງການເງິນ ໃຫ້ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ສະເພາະ ຫຼື ວຽກງານສະເພາະກິດໃດໜຶ່ງ.

ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ປະຕິບັດໜ້າທີ່ຄືກັນກັບເຈົ້າໜ້າທີ່ສືບສວນ-ສອບສວນ.

ສຳລັບການຈັດຕັ້ງ, ມາດຕະຖານ ແລະ ເງື່ອນໄຂ ຂອງເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 59 (ປັບປຸງ) ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ**

ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຄື່ອນໄຫວລາດຕະເວນ ແລະ ຕິດຕາມ, ກວດກາເປົ້າໝາຍຕ່າງໆ ເປັນຕົ້ນ ການລັກໂລບ, ຊື້, ຂາຍ ຫຼື ແອບອ້າງສິດ ກ່ຽວກັບຊັບສິນຂອງລັດ;

2. ຮັບ, ບັນທຶກ ການແຈ້ງຄວາມ, ການລາຍງານ ຫຼື ການຮ້ອງຟ້ອງ ກ່ຽວກັບການລະເມີດລະບຽບການຊັບສິນຂອງລັດ;

3. ສະເໜີອອກຄຳສັ່ງເປີດການສືບສວນ-ສອບສວນ, ໝາຍຮຽກ, ໝາຍເຊີນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກສົງໄສ ທີ່ຖືກກັກຕົວ, ຄຳສັ່ງໂຈະ ຫຼື ຊັດມ້ຽນຄະດີ;

4. ດຳເນີນຄະດີອາຍາຕໍ່ຜູ້ຖືກຫາ ເປັນຕົ້ນ ດຳເນີນການສືບສວນ-ສອບສວນ ແລະ ນຳໃຊ້ມາດຕະການສະກັດກັ້ນ ແລະ ວິທີການສືບສວນ-ສອບສວນ;

5. ທວງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງແຈ້ງ ເອກະສານ, ບັນຊີຊັບສິນຂອງລັດ ແລະ ຂໍ້ມູນທີ່ກ່ຽວຂ້ອງ;

6. ຄຸ້ມຄອງ ແລະ ປົກປັກຮັກສາ ພາຫະນະ, ວັດຖຸ ແລະ ສິ່ງກໍ່ສ້າງ ລວມທັງເອກະສານທີ່ກ່ຽວຂ້ອງທີ່ໄດ້ຍຶດ ຫຼື ອາຍັດ;

7. ຕິດຕາມການດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ-ສອບສວນອື່ນ ທີ່ຕິດພັນກັບຊັບສິນຂອງລັດ;

8. ນຳໃຊ້ເຄື່ອງມືສື່ສານ, ພາຫະນະ, ອາວຸດ ແລະ ບັດເຄື່ອນໄຫວພິເສດຂອງຕົນ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຄຸ້ມຄອງຊັບສິນຂອງລັດ;

9. ຮັກສາຄວາມລັບຂອງລັດ ແລະ ທາງລັດຖະການ ກ່ຽວກັບການດຳເນີນຄະດີຊັບສິນຂອງລັດ;

10. ພົວພັນ, ປະສານສົມທົບກັບການຈັດຕັ້ງອື່ນ ລວມທັງອົງການປົກຄອງທ້ອງຖິ່ນ ທີ່ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງຕົນ;

11. ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນພິຈາລະນາສັ່ງຟ້ອງຂຶ້ນສານ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VII
## ງົບປະມານ, ເຄື່ອງແບບ, ກາໝາຍ ແລະ ຕາປະທັບ

### ມາດຕາ 60 ງົບປະມານ

ອົງການຄຸ້ມຄອງວຽກງານຊັບສິນແຫ່ງລັດ ມີງົບປະມານສະເພາະ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

ການຂຶ້ນແຜນງົບປະມານນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 61 (ປັບປຸງ) ເຄື່ອງແບບ, ກາໝາຍ ແລະ ຕາປະທັບ

ຂະແໜງການຄຸ້ມຄອງຊັບສິນແຫ່ງລັດ ມີເຄື່ອງແບບ ແລະ ກາໝາຍສະເພາະ ທີ່ນຳໃຊ້ເຂົ້າໃນວຽກງານຂອງຕົນ. ສຳລັບເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ຍັງຕ້ອງມີບັດປະຈຳໜ້າທີ່.

ຂະແໜງການຄຸ້ມຄອງຊັບສິນແຫ່ງລັດແຕ່ລະຂັ້ນ ມີຕາປະທັບຂອງຕົນ ເພື່ອຮັບໃຊ້ວຽກງານທາງລັດຖະການ.

ເຄື່ອງແບບ, ກາໝາຍ ແລະ ຕາປະທັບ ແມ່ນ ລັດຖະບານເປັນຜູ້ຕົກລົງ ຕາມການສະເໜີຂອງກະຊວງການເງິນ. ສຳລັບບັດປະຈຳໜ້າທີ່ ແມ່ນ ກະຊວງການເງິນ ເປັນຜູ້ອອກໃຫ້.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 62 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ ແລະ ພັດທະນາຊັບສິນຂອງລັດ ຢ່າງມີປະສິດທິຜົນ, ສະໜອງຂໍ້ມູນກ່ຽວກັບການລະເມີດ ຫຼື ການບໍ່ປະຕິບັດພັນທະ, ທວງເກັບລາຍຮັບ ຈາກຊັບສິນຂອງລັດ ທີ່ເຊື່ອງອຳພາງມາໄດ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 63 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

ສຳລັບພຶດຕິກຳ ແລະ ອັດຕາປັບໃໝ ກ່ຽວກັບການລະເມີດວຽກງານຊັບສິນຂອງລັດ ໃຫ້ລັດຖະບານເປັນຜູ້ກຳນົດ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 64 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 65 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ຕຸລາ 2022 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 14/ສພຊ, ລົງວັນທີ 5 ກໍລະກົດ 2012.

**ປະທານສະພາແຫ່ງຊາດ**

**ບອ ໄຊສົມພອນ ພົມວິຫານ**